# ປັດໄຈທີ່ມີອິດທິພົນຕໍ່ອຸປະສົງການທ່ອງທ່ຽວຂອງຊາວຕ່າງຊາດທີ່ເຂົ້າມາທ່ຽວລາວ

# Factor influencing of international tourism demand in Laos PDR

**ອະທິກອນບຸພານຸວົງ[1]ແສງສຸລີໄຊສີຂານທອງ[2]ສາຄອນແກ້ວສຸບິນ[3]**


## ABSTACT

The tourism industry has been an important contributor to Laos's economy and it's a very significant strategy for the development this paper which investigates the significant influence of economic factor in deferring international tourism demands in Lao PDR. the demand for tourism can be explained by macro-economic variables, including GDP per capital , in the origin countries, tourism price , namely the cost of traveling from origin countries ,exchange rate and relationship price consumer price index. The study was used to data between 2003-2014. The LLE,IPS,ADE, and T-.test were utilized in order to evaluate unit root. Co-integration and ECM were estimates in order to explain the levels of number tourist in Laos PDR. The result showed that the long and short run equilibrium was found to be significant across all variables; the income variable appeared to be highly sensitive and tourism price.


Keywords: Tourism demand, co-integration analysis, ECM mode


## ບົດຄັດຫຍໍ້

ອຸດສະຫະກຳການທ່ອງທ່ຽວປະຈຸບັນເປັນລາຍໄດ້ຂອງປະເທດແລະມັນເປັນສ່ວນສຳຄັນໃນການກະຕຸ້ນເສດຖະກິດນັບຕັ້ງແຕ່ລະດັບຊຸມຊົນຮອດຂັ້ນປະເທດບົດວິໄຈບົດນີ້ໄດ້ສຶກສາປັດໄຈທີ່ມີອິດທິພົນຕໍ່ຈຳນວນນັກທ່ອງທ່ຽວຕ່າງຊາດທີ່ເຂົ້າມາທ່ຽວລາວໂດຍໄດ້ວິເຄາະຄວາມສຳພັນຂອງບັນດາຕົວປ່ຽນຕາມແລະຕົວປ່ຽນອິດສະຫຼະທັງໄລຍະສັ້ນແລະໄລຍະຍາວ. ສຳລັບຕົວປ່ຽນທີ່ນຳມາສຶກສາປັດໄຈທາງດ້ານເສດຖະກິດມະຫາພາກນັ້ນປະກອບດ້ວຍລາຍໄດ້ຕໍ່ຫົວຄົນຂອງນັກທ່ອງທ່ຽວປະເທດຕົ້ນທາງທີ່ເຂົ້າມາທ່ຽວລາວ, ລາຄາສິນຄ້າໂດຍປຽບທຽບລະຫວ່າງປະເທດຕົ້ນທາງກັບປະເທດລາວຄ່າໃຊ້ຈ່າຍໃນການເດີນທາງລະຫວ່າງປະເທດແລະອັດຕາແລກປ່ຽນການສຶກສາຄັ້ງນີ້ໃຊ້ຂໍ້ມູນໄຂວ່ອະນຸກົມເວລາPanel data ແຕ່ປີ 2003-2014 ນຳມາສຶກສາໂດຍໃຊ້ວິທີLLC, IPS, APF ແລະ PP ໃນການທົດສອບຄວາມນິ້ງຂອງຂໍ້ມູນສຶກສາສະຫະສຳພັນໃນໄລຍະຍາວດ້ວຍວິທີCointegration ແລະສະຫະສຳພັນໃນໄລຍະສັ້ນເພື່ອປັບຈຸດສົມດູນເຂົ້າສູ່ໄລຍະຍາວດ້ວຍວິທີECM. ຜົນການສຶກສາປັດໄຈທີ່ມີອິດທິພົນຕໍ່ອຸປະສົງຂອງນັກທ່ອງທ່ຽວຊາວຕ່າງຊາດທີ່ເຂົ້າມາທ່ຽວລາວຈາກການວິເຄາະໂດຍໃຊ້ເຄື່ອງມືທາງເສດຖາມິຕິເຫັນວ່າລາຍໄດ້ສະເລ່ຍຕໍ່ຫົວຄົນມີຜົນຕໍ່ການເດີນທາງເຂົ້າມາທ່ຽວລາວແລະຄ່າໃຊ້ຈ່າຍໃນການເດີນທາງລະຫວ່າງປະເທດປັດໄຈຮອງລົງມາແມ່ນລາຄາສິນຄ້າໂດຍປຽບທຽບສ່ວນອັດຕາແລກປ່ຽນບໍ່ມີຜົນໃດໆຕໍ່ອຸປະສົງຂອງນັກທ່ອງທ່ຽວແລະບັນດາປັດໄຈຂ້າງເທິງພົບວ່າມີຄວາມສຳຄັນໃນໄລຍະສັ້ນແລະໄລຍະຍາວທີ່ມີຜົນຕໍ່ການປັບຕົວເມື່ອເກີດເຫດການໃດໆທາງເສດຖະກິດ.


---

[1]ພາກວິຊາສາດຖະສາດ, ຄະນະເສດຖະສາດແລະການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ

*Economics Department, Faculty of Economics and Management, Champasack University.*
*Corresponding author : Tel (+85620) 54756888,*
*Email Address Athikonebouphanouvong@yahoo.com*

[2]ຫ້ອງການວິຊາການຂອງມະຫາວິທະຍາໄລ ຈຳປາສັກ

*Academic Office of Champasack University*
*Corresponding author : Tel (+85620) 99338509, Email Address: sengsulixayskt@gmail.com*

[3]ພາກວິຊາສາດຖະສາດ, ຄະນະເສດຖະສາດແລະການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ

# Factor influencing of international tourism demand in Laos PDR

ອະທິກອນບຸຜານຸວົງ[4]ແສງສຸລິໄຊສີຂານທອງ[5]ສາຄອນແກ້ວສຸບິນ[6]


## ABSTACT

The tourism industry has been an important contributor to Laos's economy and it's a very significant strategy for the development this paper which investigates the significant influence of economic factor in deferring international tourism demands in Lao PDR. the demand for tourism can be explained by macro-economic variables, including GDP per capital , in the origin countries, tourism price, namely the cost of traveling from origin countries ,exchange rate and relationship price consumer price index. The study was used to data between 2003-2014. The LLE,IPS,ADE, and T-test were utilized in order to evaluate unit root. Co-integration and ECM were estimates in order to explain the levels of number tourist in Laos PDR. The result showed that the long and short run equilibrium was found to be significant across all variables; the income variable appeared to be highly sensitive and tourism price.


Keywords: Tourism demand, co-integration analysis, ECM mode


## ບົດຄັດຫຍໍ້

ອຸດສະຫະກຳການທ່ອງທ່ຽວປະຈຸບັນເປັນລາຍໄດ້ຂອງປະເທດແລະມັນເປັນສ່ວນສຳຄັນໃນການກະຕຸ້ນເສດຖະກິດນັບຕັ້ງແຕ່ລະດັບຊຸມຊົນຮອດຂັ້ນປະເທດບົດວິໄຈບົດນີ້ໄດ້ສຶກສາປັດໄຈທີ່ມີອິດທິພົນຕໍ່ຈຳນວນນັກທ່ອງທ່ຽວຕ່າງຊາດທີ່ເຂົ້າມາທ່ຽວລາວໂດຍໄດ້ວິເຄາະຄວາມສຳພັນຂອງບັນດາຕົວປ່ຽນຕາມແລະຕົວປ່ຽນອິດສະຫຼະທັງໄລຍະສັ້ນແລະໄລຍະຍາວ. ສຳລັບຕົວປ່ຽນທີ່ນຳມາສຶກສາປັດໄຈທາງດ້ານເສດຖະກິດມະຫາພາກນັ້ນປະກອບດ້ວຍລາຍໄດ້ຕໍ່ຫົວຄົນຂອງນັກທ່ອງທ່ຽວປະເທດຕົ້ນທາງທີ່ເຂົ້າມາທ່ຽວລາວ, ລາຄາສິນຄ້າໂດຍປຽບທຽບລະຫວ່າງປະເທດຕົ້ນທາງກັບປະເທດລາວຄ່າໃຊ້ຈ່າຍໃນການເດີນທາງລະຫວ່າງປະເທດແລະອັດຕາແລກປ່ຽນການສຶກສາຄັ້ງນີ້ໃຊ້ຂໍ້ມູນໄຂວ່ອະນຸກົມເວລາPanel data ແຕ່ປີ 2003-2014 ນຳມາສຶກສາໂດຍໃຊ້ວິທີLLC, IPS, APF ແລະ PP ໃນການທົດສອບຄວາມນິ້ງຂອງຂໍ້ມູນສຶກສາສະຫະສຳພັນໃນໄລຍະຍາວດ້ວຍວິທີCointegrationແລະສະຫະສຳພັນໃນໄລຍະສັ້ນເພື່ອປັບຈຸດສົມດູນເຂົ້າສູ່ໄລຍະຍາວດ້ວຍວິທີECM. ຜົນການສຶກສາປັດໄຈທີ່ມີອິດທິພົນຕໍ່ອຸປະສົງຂອງນັກທ່ອງທ່ຽວຊາວຕ່າງຊາດທີ່ເຂົ້າມາທ່ຽວລາວຈາກການວິເຄາະໂດຍໃຊ້ເຄື່ອງມືທາງເສດຖາມິຕິເຫັນວ່າລາຍໄດ້ສະເລ່ຍຕໍ່ຫົວຄົນມີຜົນຕໍ່ການເດີນທາງເຂົ້າມາທ່ຽວລາວແລະຄ່າໃຊ້ຈ່າຍໃນການເດີນທາງລະຫວ່າງປະເທດປັດໄຈຮອງລົງມາແມ່ນລາຄາສິນຄ້າໂດຍປຽບທຽບສ່ວນອັດຕາແລກປ່ຽນບໍ່ມີຜົນໃດໆຕໍ່ອຸປະສົງຂອງນັກທ່ອງທ່ຽວແລະບັນດາປັດໄຈຂ້າງເທິງພົບວ່າມີຄວາມສຳຄັນໃນໄລຍະສັ້ນແລະໄລຍະຍາວທີ່ມີຜົນຕໍ່ການປັບຕົວເມື່ອເກີດເຫດການໃດໆທາງເສດຖະກິດ.


---


[4]ພາກວິຊາສາດຖະສາດ, ຄະນະເສດຖະສາດແລະການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ

*Economics Department, Faculty of Economics and Management, Champasack University.*
*Corresponding author : Tel (+85620) 54756888,*
*Email Address Athikonebouphanouvong@yahoo.com*

[5]ຫ້ອງການວິຊາການຂອງມະຫາວິທະຍາໄລ ຈຳປາສັກ

*Academic Office of Champasack University*
*Corresponding author : Tel (+85620) 99338509, Email Address: sengsulixayskt@gmail.com*

[6]ພາກວິຊາສາດຖະສາດ, ຄະນະເສດຖະສາດແລະການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ

## ພາກສະເໜີ

ປະຈຸບັນການທ່ອງທ່ຽວຖືວ່າເປັນກິດຈະກຳໜຶ່ງທີ່ມີຄວາມສຳຄັນຕໍ່ລະບົບເສດຖະກິດແລະສັງຄົມຂອງຊຸມຊົນທ້ອງຖິ່ນເວົ້າສະເພາະເວົ້າລວມກໍ່ຄືປະເທດຊາດເນື່ອງຈາກການທ່ອງທ່ຽວເປັນອຸດສະຫະກຳການບໍລິການຂະແໜງໜຶ່ງທີ່ມີການເຕີບໂຕສູງແລະມີບົດບາດສຳຄັນຊ່ວຍກະຕຸ້ນການຈະເລີນເຕີບໂຕຂອງລະບົບເສດຖະກິດເຊັ່ນການສ້າງວຽກເຮັດງານທຳ, ການກະຈາຍລາຍໄດ້ນອກຈາກນີ້ການທ່ອງທ່ຽວຍັງສົ່ງຜົນຕໍ່ການພັດທະນາທຸລະກິດສາຂາອື່ນໆທີ່ກ່ຽວຂ້ອງເຊັ່ນ: ທຸລະກິດໂຮງແຮມ, ບ້ານພັກ, ການຂົນສົ່ງ, ການນຳທ່ຽວແລະການຈຳໜ່າຍສິນຄ້າທີ່ລະນຶກເປັນຕົ້ນດັ່ງນັ້ນບໍ່ວ່າປະເທດພັດທະນາຫຼືປະເທດກຳລັງພັດທະນາຫຼາຍໆປະເທດຈຶ່ງອາໃສການທ່ອງທ່ຽວເປັນແນວທາງພັດທະນາເສດຖະກິດຂອງປະເທດໃຫ້ມີການຈະເລີນເຕີບໂຕແລະສົ່ງເສີມການທ່ອງທ່ຽວທັງພາຍໃນແລະຕ່າງປະເທດເປັນກ້າວໆ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ( ສປປລາວ) ກໍ່ເປັນປະເທດໜຶ່ງທີ່ຫັນເອົາການທ່ອງທ່ຽວເປັນຍຸດທະສາດໃນການພັດທະນາປະເທດເຊິ່ງປະຈຸບັນການທ່ອງທ່ຽວສາມາດສ້າງລາຍຮັບເຂົ້າປະເທດເປັນອັນດັບ2ຮອງຈາກຂະແໜງການບໍ່ແຮ່ ( ອີງການທ່ອງທ່ຽວແຫ່ງຊາດ, 2014) ສາມາດສ້າງລາຍຮັບໄດ້514ລ້ານໂດລາໃນປີຜ່ານມາ, ລັດຖະບານລາວໄດ້ເອົາໃຈໃສ່ສົ່ງເສີມທາງດ້ານໂຄງຮ່າງພື້ນຖານແລະສິ່ງອຳນວຍຄວາມສະດວກຕ່າງໆເພື່ອດຶງດູດນັກທ່ອງທ່ອງໃຫ້ເຂົ້າມາທ່ຽວລາວເພີ່ມຂຶ້ນການທ່ອງທ່ຽວຂອງລາວເຮົາມີທ່າອ່ຽງຂະຫຍາຍໂຕເພີ່ມຂຶ້ນຊຶ່ງມັນໄດ້ສະແດງອອກຢູ່ທີ່ມີນັກທ່ອງທ່ຽວຄົນຕ່າງຊາດເຂົ້າມາທ່ຽວເພີ່ມຂຶ້ນໃນແຕ່ລະປີດັ່ງສະແດງໃນຕາຕະລາງລຸມນີ້.

ຕາຕະລາງທີ1.ຈຳນວນນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ຽວລາວແລະລາຍຮັບຈາກການທ່ອງທ່ຽວ

| ປີ | ຈຳນວນນັກທ່ອງທ່ຽວ | ສ່ວນຕ່າງ (%) | ຈຳນວນວັນສະເລ່ຍທີ່ເຂົ້າມາທ່ຽວ | ລາຍຮັບ ($) |
|---|---|---|---|---|
| 1990 | 14,400 | - | - | - |
| 1991 | 37,613 | 161 | - | 2,250,000 |
| 1992 | 87,571 | 133 | - | 4,510,000 |
| 1993 | 102,946 | 18.00 | - | 6,280,000 |
| 1994 | 146,155 | 42.00 | - | 7,557,000 |
| 1995 | 346,460 | 137 | - | 24,738,480 |
| 1996 | 403,000 | 16.00 | 3.30 | 43,592,263 |
| 1997 | 463,200 | 15.00 | 4.00 | 73,276,904 |
| 1998 | 500,200 | 8.00 | 3.70 | 79,960,145 |
| 1999 | 614,278 | 23.00 | 4.00 | 97,265,324 |
| 2000 | 737,208 | 20.00 | 4.00 | 113,898,285 |
| 2001 | 673,823 | -8.60 | 5.20 | 103,786,323 |
| 2002 | 735,662 | 9.00 | 4.30 | 113,409,883 |
| 2003 | 636,361 | -13.50 | 4.00 | 87,302,412 |
| 2004 | 894,806 | 41.00 | 4.30 | 118,947,707 |
| 2005 | 1,095,315 | 22.00 | 4.50 | 146,770,074 |
| 2006 | 1,215,106 | 11.00 | 4.50 | 173,249,896 |
| 2007 | 1,623,943 | 34.00 | 4.50 | 233,304,695 |
| 2008 | 1,736,787 | 7.00 | 4.25 | 275,515,758 |
| 2009 | 2,008,363 | 16.00 | 4.50 | 267,700,224 |
| 2010 | 2,513,028 | 25.00 | 4.50 | 381,669,031 |
| 2011 | 2,723,564 | 8.00 | 4.50 | 406,184,338 |

ແຫຼ່ງຂໍ້ມູນ:  Tourism Development, Lao PDR .2011

ຈາກຂໍ້ມູນຂ້າງເທິງນັ້ນສະແດງໃຫ້ເຫັນຈຳນວນນັກທ່ອງທ່ຽວຕ່າງປະເທດເຂົ້າມາທ່ຽວລາວແລະສະແດງໃຫ້ເຫັນການເຕີບໂຕຂອງລາຍຮັບດ້ານການທ່ອງທ່ຽວຈະເຫັນໄດ້ວ່າການເດີນທາງເຂົ້າມາທ່ອງທ່ຽວຂອງນັກທ່ອງທ່ຽວຫຼາຍຂຶ້ນໃນແຕ່ລະປີຕໍ່ກັບການເຕີບໂຕດັ່ງກ່າວທາງລັດຖະບານລາວກໍ່ຕັ້ງກະຊວງຖະແຫຼງຂ່າວແລະວັດທະນະທຳກໍ່ໄດ້ມີແຜນເປີດແຫຼ່ງທ່ອງທ່ຽວໃໝ່ເພື່ອດຶງດູດນັກທ່ອງທ່ຽວທັງພາຍໃນແລະຕ່າງປະເທດ. ສິ່ງນັ້ນກໍ່ບໍ່ໄດ້ໝາຍຄວາມວ່າມັນເປັນປັດໄຈຕັດສິນເຮັດໃຫ້ນັກທ່ອງທ່ຽວເຂົ້າມາທ່ຽວລາວເພີ່ມຂຶ້ນໄດ້ເພາະມັນມີຫຼາຍປັດໄຈທີ່ມີຜົນຕໍ່ການຕັດສິນໃຈຂອງເຂົາເຈົ້ານັ້ນມີທັງປັດໄຈພາຍໃນປະເທດແລະປັດໄຈພາຍນອກ,ບົດລາຍງານໄດ້ລະບຸວ່າ, ປັດໄຈພາຍໃນທີ່ສາມາດດຶງດູດນັກທ່ອງທ່ຽວຕ່າງປະເທດ ຄືທິວທັດທຳມະຊາດທີ່ສວຍງາມ, ວັດທະນະທຳທີ່ມີຢ່າງອຸດົມສົມບູນ, ສະພາບແວດລ້ອມດ້ານການເມືອງ ແລະ ສັງຄົມມີຄວາມໝັ້ນຄົງ. (ບົດລາຍງານອົງການທ່ອງທ່ຽວແຫ່ງຊາດ, 2013)ບົດລາຍງານຍັງໄດ້ກ່າວອີກວ່າ, ລັດຖະບານລາວໄດ້ພະຍາຍາມປັບປຸງພື້ນຖານໂຄງລ່າງແລະຂະແໜງການບໍລິການໃຫ້ສົມບູນກວ່າເກົ່າ, ເພື່ອດຶງດູດນັກທ່ອງທ່ຽວຕ່າງປະເທດໃຫ້ມາທ່ອງທ່ຽວລາວຫຼາຍກວ່າເກົ່າແລະຄາດຄະແນວ່າໃນອະນາຄົດຈະມີການພັດທະນາຢ່າງຫຼວງຫຼາຍ. ນັ້ນຄືປັດໄຈພາຍໃນສ່ວນປັດໄຈພາຍນອກກໍ່ເປັນປັດໄຈສຳຄັນຢ່າງໜຶ່ງທີ່ສາມາດເຮັດໃຫ້ນັກທ່ອງທ່ຽວມາທ່ຽວລາວຫຼາຍຂຶ້ນ Gonzalez and Moral (1995), Turner, L. W., & Witt, S. F. (2001), Dritsakis (2004), Narayan, P. K. (2004), Lim (1997), E.I.Lelwala and L.H.P. Gunaratne. (2008), Lim et al. (2009), Jintranun et al. (2011), GarnMuoz, Teresa.(2006),Aslan et al. (2008), GarinMunoz and MonteroMartin (2007), Ouerfelli (2008), Song et al. (2003), Allen et al. (2009), Kusni et al. (2013), Asemota and Bala (2012). ສຳລັບໃນລາວລັດສະໝີປະດິດໂຊດແລະດອງຮັນຄິມ (2007) ໄດ້ເຮັດການວິໄຈກ່ຽວກັບຄວາມຕ້ອງການຂອງນັກທ່ອງທ່ຽວຕ່າງຊາດທີ່ຕ້ອງການເຂົ້າມາທ່ຽວລາວໂດຍໃຊ້ຂໍ້ມູນ1995-2004ເພື່ອການປະເມີນຄ່າຄວາມຕ້ອງການຂອງນັກທ່ອງທ່ຽວທີ່ຕ້ອງການເຂົ້າມາທ່ຽວລາວຜົນການສຶກສາພົບວ່າລາຍໄດ້ແລະລາຄາສິນຄ້າມີຄວາມຫົດຍືດຫຼາຍຕໍ່ຄວາມຕ້ອງການຂອງນັກທ່ອງທ່ຽວນັ້ນໝາຍຄວາມວ່າຖ້າລາຍໄດ້ຂອງປະເທດຕົ້ນທາງປ່ຽນແປງກໍ່ຈະເຮັດໃຫ້ຄວາມຕ້ອງການຂອງເຂົາເຈົ້າເພີ່ມຂຶ້ນໃນອັດຕາຫຼາຍກວ່າ

ສຳລັບການສຶກສາຄັ້ງນີ້ພວກຂ້າພະເຈົ້າໄດ້ສ້າງແບບຈຳລອງທາງເສດຖະສາດເພື່ອເປັນແບບຈຳລອງເບື້ອງຕົ້ນສຳລັບປະເທດລາວໂດຍມີຄວາມສົນໃຈຕ້ອງການສຶກສາປັດໄຈທີ່ມີອິດທິພົນຕໍ່ອຸປະສົງການທ່ອງທ່ຽວຂອງນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ຽວລາວເພື່ອສືບຕໍ່ແນວຄວາມຄິດຂອງລັດສະໝີປະດິດໂຊດແລະດອງຮັນຄິມ (2007) ໃນການກຳນົດຂອງຄວາມຕ້ອງການຂອງນັກທ່ອງທ່ຽວແລະເພື່ອເປັນແນວທາງໃນການວາງແຜນແລະກຳນົດນະໂຍບາຍຢ່າງຖືກຕ້ອງໃນການສົ່ງເສີມແລະດຶງດູນັກທ່ອງທ່ຽວຕ່າງປະເທດເຂົ້າມາທ່ຽວລາວໃຫ້ຫຼາຍຂຶ້ນເພື່ອຮອງຮັບກັບການເຂົ້າເປັນສະມາຄົມອາຊຽນຕໍ່ການຊຸກຍູ້ການທ່ອງທ່ຽວ.

**ຈຸດປະສົງໃນການສຶກສາ**

ໃນການສຶກສາປັດໄຈທີ່ມີອິດທິພົນຕໍ່ອຸປະສົງການທ່ອງທ່ຽວຂອງນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ຽວລາວພວກຂ້າພະເຈົ້າຈຶ່ງກຳນົດຈຸດປະສົງຂອງການສຶກສາດັ່ງນີ້.

1. ສຶກສາປັດໄຈທີ່ມີອິດທິພົນຕໍ່ອຸປະສົງຂອງນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ຽວໃນສປປລາວ
2. ສຶກສາການຕອບສະໜອງຕໍ່ປັດໄຈຕ່າງໆຂອງນັກທ່ອງທ່ຽວຕ່າງປະເທດທີ່ເດີນທາງເຂົ້າມາທ່ຽວລາວ

**ວິທີການຄົ້ນຄ້ວາ-ວິໄຈ**

**ຂອບເຂດໃນການສຶກສາ**

ການສຶກສາຄັ້ງນີ້ແມ່ນຈະໃຊ້ຂໍ້ມູນຈາກອີງການທ່ອງທ່ຽວແຫ່ງຊາດເຊິ່ງຈະໄດ້ນຳໃຊ້ຂໍ້ມູນຂອງປະເທດຕົ້ນທາງໃນ10 ປະເທດອັນດັບຕົ້ນໆທີ່ເຂົ້າມາທ່ຽວໃນປະເທດລາວຄືThailand, Vietnam, Korea, USA, France, Japan, China, UK, Australia ແລະGermany ເຊິ່ງຂໍ້ມູນທີ່ໃຊ້ເປັນຂໍ້ມູນມືສອງຈາກCentral Bank of the Republic of China (Taiwan) ແລະLao National Tourism Administration

**ຈຸດປະສົງຂອງການສຶກສາ**

ການສຶກສາປັດໄຈທີ່ມີອິດທິພົນຕໍ່ອຸປະສົງຂອງນັກທ່ອງທ່ຽວຊາວຕ່າງປະເທດທີ່ມາທ່ຽວລາວໃນຄັ້ງນີ້ຈະທຳການສຶກສາໂດຍໃຊ້ຂໍ້ມູນPanel Data (ປະກອບດ້ວຍຂໍ້ມູນພາກຕັດຂວາງແລະຂໍ້ມູນອະນຸກົມເວລາ)

ຂໍ້ມູນພາກຕັດຂວາງຄືປະເທດຕົ້ນທາງຂອງນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ຽວໃນລາວຫຼາຍທີ່ສຸດໃນ10ອັນດັບທຳອິດໃນປີ2013ເຊິ່ງມີປະເທດThailand, Vietnam, Korea, USA, France, Japan, China, UK, Australia ແລະGermany ຕາມລຳດັບກຳນົດໃຫ້N ຄືຈຳນວນຂໍ້ມູນພາກຕັດຂວາງດັ່ງນັ້ນN= 10. ຂໍ້ມູນອະນຸກົມເວລາແມ່ນຂໍ້ມູນລາຍປີຂອງປະເທດຕົ້ນທາງແຕ່ລະປະເທດນັບຕັ້ງແຕ່ປີ2003-2014ລວມທັງໝົດ12ປີກຳນົດໃຫ້T ແມ່ນຂໍ້ມູນອະນຸກົມເວລາດັ່ງນັ້ນT = 12

ຈຳນວນຄ່າສັງເກດຂອງຂໍ້ມູນPanel ເທົ່າກັບN*T ດັ່ງນັ້ນຈຳນວນຄ່າສັງເກດເທົ່າກັບ120 ໃນແບບຈຳລອງທີ່ໃຊ້ໃນການສຶກສາ

ໃນການວິເຄາະຄັ້ງນີ້ຈະຫາຄວາມສຳພັນກັນລະຫວ່າງຕົວແປຕົ້ນແລະຕົວແປຕາມພ້ອມກັນນັ້ນຈະທຳການປະເມີນຄ່າໂດຍໃຊ້ແບບຈຳລອງPanel Co-integrationເຊິ່ງເຮົາສາມາດຂຽນໄດ້ດັ່ງນີ້

$$lnDT_{it} = \alpha_i + \beta_{1i}lnGDP_{it} + \beta_{2i}lnTP_{it} + \beta_{3i}lnRP_{it} + \beta_{4i}lnEX_{it} + \varepsilon_{it}$$

**ວິທີວິເຄາະຂໍ້ມູນ**

ການປະເມີນອຸປະສົງຫຼືຄວາມຕ້ອງການຂອງນັກທ່ອງທ່ຽວຊາວຕ່າງປະເທດທີ່ຕ້ອງການມາທ່ຽວໃນລາວຄັ້ງນີ້ໃຊ້ການວິເຄາະຄວາມນິ່ງຂອງຂໍ້ມູນແລະທົດສອບແບບPanel Co-integrationເພື່ອທົດສອບຄວາມສຳພັນຂອງຕົວແປໃນແບບຈຳລອງຂອງອຸປະສົງການທ່ອງທ່ຽວແລະການປະເມີນຄ່າຄວາມສຳພັນຂອງແບບຈຳລອງເຊິ່ງມີຂັ້ນຕອນວິເຄາະດັ່ງນີ້:

1.ທົດສອບຄວາມນິ້ງຂອງຂໍ້ມູນຕົວແປແຕ່ລະຕົວໂດຍໃຊ້ວິທີທົດສອບPanel Unit root test ດ້ວຍວິທີຂອງ LLC Test, IPS Test, ADF Test ແລະPP Tests

2.ທົດສອບPanel Co-integrationຄືທົດສອບຄວາມສຳພັນລະຫວ່າງຕົວແປໃນແບບຈຳລອງຂອງອຸປະສົງການທ່ອງທ່ຽວຂອງຕ່າງປະເທດທີ່ເຂົ້າມາທ່ຽວໃນລາວວ່າມີຄວາມສຳພັນກັນຫຼືບໍ່ນັ້ນຄືເປັນການທົດສອບວ່າປັດໄຈຕ່າງໆທີ່ໃຊ້ເຂົ້າໃນການສຶກສາມີອິດທິພົນຕໍ່ກັບອຸປະສົງການທ່ອງທ່ຽວຂອງນັກທ່ອງທ່ຽວຕ່າງປະເທດຫຼືບໍ່ໂດຍໃຊ້ການວິເຄາະແບບວິທີຂອງPedroni,ວິທີຂອງKaoແລະFisher(Johansson).

**ຜົນໄດ້ຮັບຈາກການຄົ້ນຄວ້າແລະວິພາກບົດ**

ຜົນທົດສອບPanel unit root ( ຂໍ້ມູນໄຂ່ວອະນຸກົມເວລາ ) ໃນລະດັບ($1^{st}$ differential)

| ຕົວປ່ຽນ | Lndt | Ln GDP | Ln RP | Ln tp | Ln EX |
|---|---|---|---|---|---|
| LLC | -12-.6899*** ( 0.0000 ) | -6.3882*** ( 0.0000 ) | -7,8070*** ( 0.0000 ) | -23,0205*** ( 0.0000 ) | -4,7988*** ( 0.0000 ) |
| IPS | -9.1760*** ( 0.0000 ) | -3.4429*** ( 0.0000 ) | -5.4235*** ( 0.0000 ) | -10.2541*** ( 0.0000 ) | -2.5092** ( 0.0061 ) |
| ADF | 99.56-05*** ( 0.0000 ) | 44.9133** ( 0.0011 ) | 61.8487*** ( 0.0000 ) | 54,7400*** ( 0.0000 ) | 39.9900** ( 0.0050 ) |
| PP | 137.107*** ( 0.0000 ) | 61.051-0*** ( 0.0000 ) | 62.6711*** ( 0.0000 ) | 41.5621** ( 0.0032 ) | 36.4812* ( 0.0135 ) |

ທີ່ມາ: ຈາກການຄຳນວນ

ໝາຍເຫດ: (1) ໃນວົງເລັບຄືຄ່າprobability, (2) ສັນຍາລັກ ***,**,* ໝາຍເຖິງລະດັບຄວາມສຳຄັນທາງສະຖິຕິ1%, 5%ແລະ10%ຕາມລຳດັບ.

ຜົນການທົດສອບທາງນີ້ງຂອງບັນດາຕົວແປຂ້າງເທິງທີ່ລະດັບຜົນຕ່າງອັນດັບໜຶ່ງ( 1stDefferential ) ຫຼືI ( 1 ) ພົບວ່າຄ່າສະຖິຕິທີ່ໄດ້ຈາກການທົດສອບຕົວແປln( Dt )it , ln (GDP)it , ln( RP)it _ແລະln( TP)it ດ້ວຍວິທີLLC, IPC , ADP ແລະPP- Fisher ຢູ່ໃນຊ່ວງປະຕິເສດສົມມຸດຖານຫຼັກທີ່ລະດັບຄວາມສຳຄັນ0.001, 0.05 ແລະ0.1ດັ່ງນັ້ນສະຫຼຸບເຫັນວ່າຕົວແປຂ້າງເທິງບໍ່ມີunit root ຫຼືໝາຍຄວາມວ່າຂໍ້ມູນເຮົານີ້ງ(stationary).

ຜົນການທົດສອບpanel co-integration testໄດ້ກຳນົດໃຫ້ຄວາມຕ້ອງການຊາວຕ່າງຊາດເຂົ້າມາທ່ຽວລາວເປັນຕົວແປຕາມ ( lndt)it ສ່ວນຕົວແປln (GDP)it , ln( RP)it _ແລະln( TP)it ເປັນຕົວແປອິດສະຫຼະເຊິ່ງຈະທົດສອບດ້ວຍວິທີPedroni residual co-inteegrationແລະKao test ເຊິ່ງຜົນການທົດສອບມີລາຍລະອຽດຄື: ຜົນການທົດສອບpanel co-integrative test ດ້ວຍວິທີPedroniລະຫວ່າງdtແລະln(GDP), RP , EX ພົບວ່າຄ່າສະຖິຕິpanel PP, panel ADF-statistic, group PP-statisticແລະgroup ADF-statisticຢູ່ໃນຊ້ວງປະຕິເສດສົມມຸດຖານທີ່ລະດັບຄວາມສຳຄັນ0.01ດັ່ງນັ້ນຕົວແປdtແລະln (GDP)it , ln( RP)it ແລະln( TP)itມີຄວາມສຳພັນກັນໃນໄລຍະຍາວແລະເມື່ອທົດສອບKao Testພົບວ່າຄວາມສຳຄັນທາງສະຖິຕິ0.1ຄ່າສະຖິຕິທີ່ໄດ້ຈາກການທົດສອບປະຕິເສດສົມມຸດຖານຫຼັກດັ່ງນັ້ນຕົວແປdt ແລະ ln (GDP)it , ln( RP)it , ln( TP)itມີຄວາມສຳພັນໃນໄລຍະຍາວ.

ຕາຕະລາງທີ 2. ສະແດງການວິເຄາະCo-integrationດ້ວຍວິທີPedroniແລະKao Test

| | ຄ່າສະຖິຕິທີ່ໃຊ້ທົດສອບ | Df | | | |
|---|---|---|---|---|---|
| | | GDP | RP | TP | EX |
| Pedroni cointegration test | Panel V-Statistic | 1.1796 (0.1191) | 0.3943 (0.3467) | 1.3131 (0.0946) | -0.9823 (0.837) |
| | Panel rho-Statistic | -1.0571 (0.1452) | 0.2613 (0.3969) | -2.1874 (0.0144) | 1.3818 (0.9165) |
| | Panel PP-statistic | -3.0729*** (0.0002) | -2.6034** (0.0046) | -4.3285*** (0.000) | 0.6247 (0.7339) |
| | Panel AD F | -3.5448*** (0.0002) | -2.0753*** (0.0019) | -4.3173*** (0.000) | 0.9753 (0.8353) |
| | Group Pho-statistic | 0.5503 (0.7090) | -0.1986 (0.4213) | -0.3839 (0.3505) | 1.4624 (0.9282) |
| | Group Pho-statistic | -2.6758** (0.0037) | -3.047*** (0.0002) | -4.7602*** (0.000) | -1.4212 (0.0776) |
| | Group ADF | -3.0141*** (0.0013) | -3.102*** (0.001) | -4.8858*** (0.000) | -0.8333 (0.2023) |
| Kao test | ADF | -3.147*** (0.0008) | -2.1333*** (0.0016) | 3.0332*** (0.0012) | -1.1979 (0.1155) |

ທີ່ມາ: ຈາກການຄຳນວນ

ໝາຍເຫດ: (1) ໃນວົງເລັບຄືຄ່າprobability, (2)ສັນຍາລັກ ***,**,* ໝາຍເຖິງລະດັບຄວາມສຳຄັນທາງສະຖິຕິ1%, 5%ແລະ10%ຕາມລຳດັບ.

ການວິເຄາະແບບFisher ຜົນການສຶກສາສະແດງຜົນການທົດສອບ C0-Integrstion ເພື່ອຫາຄວາມສຳພັນໄລຍະຍາວຕາມຫຼັກການຂອງJohansen ໃນຮູບແບບຂອງVector auto regressive model (VAR) ເຮົາຈະເລີ່ມໄດ້ຈາກການພິຈາລະນາຫາrank ເພື່ອເລືອກຫາຈຳນວນC0-Integrstion ໂດຍວິທີLikelihood Ratio Test ແບບ Maximal Eigenvalue ທົດສອບ$H_0$ : r=0 ແລະ$H_1$ : r=1, ຖ້າປະຕິເສດ$H_0$ສະແດງວ່າr=1 ແລະທົດສອບຕໍ່ໄປຢ່າງຕໍ່ເນື່ອງຈົນກວ່າຈະພົບ$H_0$ໄດ້ຜົນການທົດສອບສະແດງໃນຕາຕະລາງລຸ່ມນີ້:

ຕາຕະລາງທີ 1: ສະແດງການທົດສອບCointegrstionVectorsຂອງນັກທ່ອງທ່ຽວ

| ສົມມຸດຖານຫຼັກ $H_0$ | ສົມມຸດຖານຫຼັກ $H_1$ | ຄ່າສະຖິຕິຄຳນວນ Max test | ຄ່າວິກິດທີ 95% | ຄ່າວິກິດທີ 90% |
|---|---|---|---|---|
| $r = 0$ | r=1 | 64.5602 | 31.4200 | 34.9021 |
| $r \leq 1$ | r=2 | 41.2661 | 26.2400 | 24.0551 |
| $r \leq 2$ | r=3 | 12.1264 | 17.6040 | 11.0721 |
| $r \leq 3$ | r=4 | 4.9060 | 9.0701 | 7.6500 |

ທີ່ມາ: ຈາກການຄຳນວນ

ຈາກຕາຕະລາງທີ 1.1 ສາມາດອະທິບາຍໄດ້ວ່າເພື່ອທົດສອບສົມມຸດທິຖານ$H_0$ : r=0ແລະ$H_0$ : r=1 ເພື່ອພິຈາລະນາຄ່າສະຖິຕິທີ່ຄຳນວນຕາມMax testໄດ້ຄ່າສະຖິຕິເທົ່າກັບ64.5602ເຊິ່ງມີຄ່າຫຼາຍກວ່າຄ່າວິກິດທີ່95% (ຫຼືທີ່ລະດັບຄວາມສຳຄັນ5%) ດັ່ງນັ້ນຈຶ່ງປະຕິເສດສົມມຸດຖານ$H_0$ : r=0ແລະທົດສອບຕໍ່ໄປຈຶ່ງສາມາດໄດ້C0integrstion 2 ສົມຜົນເມື່ອຈຳນວນສົມຜົນແລ້ວຈຶ່ງທົດສອບC0integrstionເພື່ອຫາຄວາມສຳພັນໄລຍະຍາວຂອງຕົວປ່ຽນໄດ້ຄວາມສຳພັນໄລຍະຍາວດັ່ງສະແດງໃນຕາຕະລາງ

ຕາຕະລາງທີ 1: ສະແດງການທົດສອບC0integrstionVectors ເຊິ່ງເປັນຄວາມສົມດູນໃນໄລຍະຍາວໂດຍມີຄ່າສຳປະສິດດັ່ງນີ້:

| ຕົວປ່ຽນ | ຄ່າສຳປະສິດ | |
|---|---|---|
| | Vector 1 | Vector 2 |
| Dtຈຳນວນນັກທ່ອງທ່ຽວ | -1.0000 | -1.0000 |
| GDP ລາຍໄດ້ຕໍ່ຫົວຄົນ | 36.8921 | 3.6707 |
| ex ອັດຕາແລກປ່ຽນ | -0.82341 | 3.6761 |
| RP ຈຳນວນນັກທ່ອງທ່ຽວ | -12.06712 | -0.61261 |
| Tpລາຄາຕົ້ນທຶນຄ່າເດີນທາງ | -21.56641 | 0.8252 |

ການທົດສອບຄວາມສົມດູນໄລຍະຍາວພົບວ່າມີC0integrstionVector ທີ່ຮູບແບບທີ 1

ເຮົາສາມາດຂຽນໄດ້ດັ່ງນີ້:

$$Indt_{it} = 36.8921GDP_{it} - 21.56641Tp_{it} - 12.06712RP_{it} - 0.82341ex_{it}$$

ການຄຳນວນທາງປັບຕົວໄລຍະສັ້ນ( ECM) ຂອງVector ທີ່ 1 ມີຄ່າເທົ່າກັບ-0.076412 ແລະມີຄວາມສຳຄັນທາງສະຖິຕິເພື່ອພິຈາລະນາຄວາມເຊື່ອໝັ້ນທີ 95% ເຊິ່ງມີຄ່າລະດັບຄວາມສຳຄັນໄດ້ມີຄ່ານ້ອຍກວ່າ0.05ຄືມີຄ່າລະດັບຄວາມສຳຄັນເທົ່າກັບ0.000 ສະແດງໃຫ້ເຫັນວ່າການປ່ຽນແປງປັດໄຈທີ່ມີຜົນກະທົບຕໍ່ການປ່ຽນແປງຈຳນວນນັກທ່ອງທ່ຽວໃນທິດທາງດຽວກັນ; ນັ້ນສະແດງວ່າເມື່ອມີການເກີດສະພາບໃດກໍ່ຕາມທີ່ເຮັດໃຫ້ເກີດການປ່ຽນແປງຂອງຈຳນວນນັກທ່ອງທ່ຽວໄລຍະຍາວອອກຈາກຈຸດສົມດຸນແລະຈະປັບເຂົ້າສູ່ຈຸດສົມດຸນຂອງຕົວປັບ ( speed of adjustment) ຂອງຈຳນວນນັກທ່ອງທ່ຽວມີຄ່າເທົ່າກັບ0.076412.

ເມື່ອພິຈາລະນາລະດັບລາຄາສິນຄ້າໂດຍປຽບທຽບລະຫວ່າງປະເທດ$(RP)_{tt}$ພົບວ່າທີ່ລະດັບຄວາມສຳຄັນ 0.01 ຄ່າສຳປະສິດມີຄວາມໄວຕໍ່ການປັບຕົວຕໍ່ອຸປະສົງຂອງນັກທ່ອງທ່ຽວຊາວຕ່າງຊາດທີ່ເຂົ້າມາທ່ຽວລາວທີ່ລະດັບ 0.028071 ໝາຍຄວາມວ່າເມື່ອເກີດພາວະໃດໆກໍ່ຕາມທີ່ມີຜົນຕໍ່ລະດັບສິນຄ້າລະຫວ່າງປະເທດອັນກໍ່ຈະເຮັດໃຫ້ການປັບຕົວກັບຄືນສູ່ຈຸດດູນຍະພາບໃນຂະໜາດ 0.028071ແລະທີ່ລະດັບຄວາມສຳຄັນ 0.10. ລະດັບລາຄາສິນຄ້າໃນຊ້ວງ 2 ປີກ່ອນໜ້ານີ້ມີຜົນຕໍ່ການປ່ຽນແປງຕໍ່ອຸປະສົງຂອງນັກທ່ອງທ່ຽວທີ່ເຂົ້າມາທ່ຽວລາວໃນປະຈຸບັນ

ເມື່ອພິຈາລະນາTPຄ່າໃຊ້ຈ່າຍໃນການເດີນທາງລະຫວ່າງປະເທດຕົ້ນທາງມາປະເທດລາວພົບວ່າລະດັບຄວາມສຳຄັນ 0.01 ຄ່າສຳປະສິດຄວາມໄວ(Speed of adjustment) ຂອງຕົວແປdtເພື່ອການປັບຕົວສູ່ດູນຍະພາບ-0.008714 ສາມາດອະທິບາຍໄດ້ວ່າເມື່ອມີການປ່ຽນແປງໃດໆຂອງTPຈະເຮັດໃຫ້ການປັບຕົວຂອງdtດ້ວຍຂະໜາດ 0.008714 ແລະລະດັບຄວາມສຳຄັນທີ່0.10 ລາຄາTPໃນ 1 ປີກໍ່ຈະມີຜົນຕໍ່dtຂອງ2 ປີກ່ອນໜ້ານີ້

ສະຫຼຸບ: ຈາກການວິໄຈປັດໄຈທີ່ມີຜົນຕໍ່ຄວາມຕ້ອງການຂອງຊາວຕ່າງຊາດທີ່ເຂົ້າມາທ່ຽວລາວພົບວ່າອັດຕາການປ່ຽນແປງຈຳນວນນັກທ່ອງທ່ຽວກັບລະດັບລາຍໄດ້ຕໍ່ຫົວຄົນໄປໃນທິດທາງດຽວກັນ, ສ່ວນອັດຕາການແລກປ່ຽນສົ່ງຜົນນ້ອຍຕໍ່ຄວາມຕ້ອງການຂອງນັກທ່ອງທ່ຽວເກືອບຈະບໍ່ມີຜົນຫຍັງເລີຍຕໍ່ການປ່ຽນແປງຈຳນວນນັກທ່ອງທ່ຽວ, ສ່ວນປັດໄຈດ້ານໃຊ້ຈ່າຍໃນການເດີນທາງມີຜົນກະທົບທາງລົບແລະລາຄາສິນຄ້າໂດຍປຽບທຽບກໍ່ຜົນທາງລົບເຊັ່ນກັນ.

ໃນການວິເຄາະຫາຄວາມສຳພັນໄລຍະສັ້ນແລະໄລຍະຍາວເຫັນວ່າແບບຈຳລອງຂອງອຸປະສົງນັກທ່ອງທ່ຽວຕ່າງຊາດເຂົ້າມາທ່ຽວລາວມີຄວາມສຳພັນໄລຍະສັ້ນແລະໄລຍະຍາວເຊິ່ງຄ່າspeed of adjustment ເທົ່າກັບ0.076412 ນັ້ນໝາຍເຖິງການປັບຕົວຈາກໄລຍະສັ້ນສູ່ຈຸດສົມດຸນໄລຍະຍາວຢູ່ທີ່0.076412.

ຂໍ້ສະເໜີແນະ: ປະຈຸບັນການທ່ອງທ່ຽວລາວຖືເປັນຂະແໜງການທີ່ສ້າງລາຍຮັບອັນດັບສອງຂອງປະເທດ ( ອີງການທ່ອງທ່ຽວແຫ່ງຊາດ: 2013) ດັ່ງນັ້ນໃນສະພາບການແຂ່ງຂັນກັນຢ່າງສົມບູນປະເທດລາວຄວນມີການກຳນົດກຸ່ມເປົ້າໝາຍຂອງນັກທ່ອງທ່ຽວໃຫ້ຊັດເຈນ, ຈາກການວິໄຈພົບວ່າຄວນຈະເຈາະກຸ່ມເປົ້າໝາຍນັກທ່ອງທ່ຽວປະເທດທີ່ມີລາຍໄດ້ສູງແລະຄວນຈະເຮັດການໂປໂມດໄປຍັງຕະຫຼາດດັ່ງຫຼາຍໆບັນຫາຮອງລົງມາລາວຄວນຈະມີການຈັດຖ້ຽວບິນທີ່ປະຢັດໃນຊ່ວງlow season ເພື່ອເປັນການກະຕຸ້ນໃຫ້ນັກທ່ອງທ່ຽວເຂົ້າທ່ຽວພາຍໃນປະເທດເພີ່ມຂຶ້ນ.

**ເອກະສານອ້າງອີງ**


Department tourism of Lao PDR.report of situation tourism in Lao PDR .Lao PDR Tourism Strategy 2006-2020

Garín-Muñoz, Teresa and Amaral, Teodosio Pérez. 2000. "An econometric model for international tourism flows to Spain." Applied Economics Letters7: 525-529.

Katafono, Resina and Gounder, Aruna. 2004. Modeling tourism demand in Fiji. Working Paper 2004/1.Economics Department, Reserve Bank of Fiji.

Levin, A; Lin, C.F and Chu, C. 2002. "Unit root tests in panel data : Asymptotic and finite-sample properties." Journal of Econometrics108: 1-24.

Lim, Christine and McAleer, Michael. 2001. "Cointegration analysis of quarterly tourism demand by Hong Kong and Singapore for Australia." Applied Economics33: 1599-1619.

_______. 2003. Modelling international travel demand from Singapore to Australia. CIRJE Discussion Papers. CIRJE-F -214 Available: http://www.e.u-tokyo.ac.jp/cirje/research/03research02dp.html (November 15, 2007).

Maloney, William F and Rojas, Gabriel V. Montes. 2005. "How elastic are sea, sand and sun? Dynamic panel estimates of the demand for tourism." Applied Economics Letters12: 277-280.

Naudé, W.A and Saayman, A. 2004. The determinants of tourist arrivals in Africa : A panel data regression analysis .Paper prepared for the International Conference, Centre for the Study of African Economies, St. Catherine's College, University of Oxford, 21-22 March 2004.

Proença, Sara A. and Soukiazis, Elias. 2005. Demand for tourism in Portugal: A panel data approach.Discussion Paper No. 29. Faculty of Economics, University of Coimbra.

World Bank. 2007. Key development data &statistics.Available: http://web.worldbank.org/ WBSITE/EXTERNAL/DATASTATISTICS/0,,contentMDK:20535285~menuPK:1192694~pagePK:64133150~piPK:64133175~theSitePK:239419,00.html (December26, 2007).

ມຈ
ມະຫາວິທະຍາໄລ ຈຳປາສັກ